ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ

ເລກທີ 2076 /ອຄ.ກອຫ

ນະຄອນຫຼວງວຽງຈັນ, ວັນທີ 14 NOV 2016

# ແຈ້ງການ

ເຖິງ: ທ່ານ ຫົວໜ້າພະແນກ ອຸດສາຫະກຳ ແລະ ການຄ້າແຂວງ ອຸດົມໄຊ, ບໍລິຄຳໄຊ, ໄຊສົມບູນ, ຄຳມ່ວນ, ສະຫວັນນະເຂດ, ສາລະວັນ ແລະ ແຂວງຈຳປາສັກ.

ເລື່ອງ: ໃຫ້ຮີບຮ້ອນ ຮື້ຖອນ ແລະ ຍຸບເລີກ ບັນດາໂຮງງານປຸງແຕ່ງໄມ້ ຈຳນວນ 28 ໂຮງງານ ທີ່ຕັ້ງຢູ່ໃກ້ ແລະ ຢູ່ໃນ ເຂດປ່າສະຫງວນ, ປ່າປ້ອງກັນ ແລະ ປ່າຫວງຫ້າມ ຫຼື ປ່າຜະລິດ.

- ອີງຕາມຄຳສັ່ງຂອງນາຍົກລັດຖະມົນຕີ ເລກທີ 15/ນຍ, ລົງວັນທີ 13/5/2016.
- ອີງຕາມ ຂໍ້ທີ 2 ມາດຕາ 52 ຂອງກົດໝາຍວ່າດ້ວຍ ອຸດສາຫະກຳປຸງແຕ່ງ ເລກທີ 48/ສພຊ, ລົງວັນທີ 27/12/2013 ຫ້າມສ້າງຕັ້ງໂຮງງານ ຢູ່ໃນເຂດປ່າສະຫງວນ, ປ່າປ້ອງກັນ ແລະ ເຂດຫວງຫ້າມທາງການ.
- ອີງຕາມຂໍ້ທີ 5 ຂອງແຈ້ງການຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ເລກທີ 930/ຫສນຍ.ກສສ, ລົງວັນທີ 5/7/16.
- ອີງຕາມວັກ 2, ຂໍ້ທີ 6 ຂອງແຈ້ງການຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ເລກທີ 1345/ຫສນຍ.ກລຂ, ລົງວັນທີ 7/9/2016.
- ອີງຕາມຂໍ້ທີ 6.1.1, ມາດຕາ 6 ຂອງຂໍ້ຕົກລົງວ່າດ້ວຍມາດຕະຖານໂຮງງານອຸດສາຫະກຳປຸງແຕ່ງໄມ້ ເລກທີ 0719/ອຄ, ລົງວັນທີ 3/4/2009 ໂຮງງານອຸດສາຫະກຳປຸງແຕ່ງໄມ້ທຸກຂັ້ນ ຕ້ອງຕັ້ງຢູ່ນອກເຂດປ່າສະຫງວນ, ປ່າປ້ອງກັນ.

ລັດຖະມົນຕີ ກະຊວງອຸດສາຫະກຳ ແລະ ການຄ້າ ແຈ້ງມາຍັງທ່ານ ເພື່ອປະຕິບັດດັ່ງນີ້:

1. ໃຫ້ພະແນກອຸດສາຫະກຳ ແລະ ການຄ້າແຂວງ ອຸດົມໄຊ, ບໍລິຄຳໄຊ, ໄຊສົມບູນ, ຄຳມ່ວນ, ສະຫວັນນະເຂດ, ສາລະວັນ ແລະ ແຂວງຈຳປາສັກ ສົມທົບກັບຂະແໜງການທີ່ກ່ຽວຂ້ອງ ພາຍໃນແຂວງ ຮີບຮ້ອນຮື້ຖອນ ແລະ ຍຸບເລີກ ບັນດາໂຮງງານປຸງແຕ່ງໄມ້ ຈຳນວນ 28 ໂຮງງານ ທີ່ຕັ້ງຢູ່ໃກ້ ແລະ ຢູ່ໃນ ເຂດປ່າສະຫງວນ, ປ່າປ້ອງກັນ ແລະ ປ່າຫວງຫ້າມ ຫຼື ປ່າຜະລິດ ຕາມວັກ 2, ຂໍ້ 6 ຂອງແຈ້ງການ ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ສະບັບເລກທີ 1345/ຫສນຍ.ກລຂ, ລົງວັນທີ 7/9/2016 (ບັນຊີ 28 ໂຮງງານ ໄດ້ຄັດຕິດມາພ້ອມນີ້). ໂດຍແຈ້ງໃຫ້ບັນດາເຈົ້າຂອງໂຮງງານກ່ຽວຂ້ອງ ຮັບຊາບ ແລະ ໃຫ້ການຮ່ວມມືໃນການຈັດຕັ້ງປະຕິບັດ ຕາມການຕົກລົງຂອງລັດຖະບານ.

2. ສຳລັບການຮື້ຖອນ ແລະ ຍຸບເລີກ ບັນດາໂຮງງານ ໃຫ້ປະຕິບັດຕາມຂັ້ນຕອນດັ່ງນີ້:

1) ແຕ່ງຕັ້ງຄະນະກຳມະການຂັ້ນແຂວງ (ຖ້າແຂວງໃດມີຄະນະກຳມະການປັບປຸງ ແລະ ດັດສົມໂຮງງານປຸງແຕ່ງໄມ້ ທີ່ໄດ້ແຕ່ງຕັ້ງຜ່ານມາແລ້ວ ກໍ່ໃຫ້ຖືເອົາຄະນະນັ້ນເລີຍ);

2) ຄະນະກຳມະການຂັ້ນແຂວງ ເຮັດບົດບັນທຶກຮ່ວມກັບເຈົ້າຂອງໂຮງງານ ໃຫ້ຢຸດເຊົາການດຳເນີນກິດຈະການ ແລະ ຮື້ຖອນໂຮງງານ ຕາມການຕົກລົງຂອງລັດຖະບານ ໂດຍເຜີຍແຜ່ຕື່ມ ບັນດາກົດໝາຍ, ລະບຽບການທີ່ກ່ຽວຂ້ອງ ໃຫ້ບັນດາເຈົ້າຂອງໂຮງງານໄດ້ຮັບຊາບ ແລະ ປະຕິບັດຢ່າງເຂັ້ມງວດ;

3) ແຈ້ງຖອນໃບທະບຽນວິສາຫະກິດ, ໃບອະນຸຍາດດຳເນີນກິດຈະການໂຮງງານ ແລະ ໃບອະນຸຍາດຕ່າງໆຂອງຂະແໜງການ ຕາມຂັ້ນຕອນຂອງກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

3. ໃນການລົງຈັດຕັ້ງປະຕິບັດຕົວຈິງຫາກພົບຄວາມຫຍຸ້ງຍາກ ໃຫ້ສະເໜີຂໍທິດຊີ້ນຳ ຈາກອຳນາດການປົກຄອງແຂວງ ແລະ ໃຫ້ຮີບຮ້ອນລາຍງານຫາກະຊວງອຸດສາຫະກຳ ແລະ ການຄ້າ ເພື່ອປຶກສາຫາລື ແລະ ລົງສົມທົບກັນແກ້ໄຂຢ່າງທັນການ.

4. ໃຫ້ລາຍງານຄວາມຄືບໜ້າ ຂອງການຈັດຕັ້ງປະຕິບັດຕົວຈິງ ທຸກໆວັນສຸກຂອງແຕ່ລະອາທິດ ຫາກະຊວງອຸດສາຫະກຳ ແລະ ການຄ້າ (ກົມອຸດສາຫະກຳ ແລະ ຫັດຖະກຳ) ຈົນກວ່າຈະສຳເລັດ;

5. ການຮື້ຖອນ ແລະ ຍຸບເລີກ ບັນດາໂຮງງານປຸງແຕ່ງໄມ້ ຈຳນວນ 28 ໂຮງງານດັ່ງກ່າວນີ້ ແມ່ນໃຫ້ສຳເລັດ ພາຍໃນເດືອນ 12/2016 ນີ້ ເພື່ອຈະໄດ້ລາຍງານຕໍ່ລັດຖະບານ.

ດັ່ງນັ້ນ, ຈິ່ງແຈ້ງມາຍັງທ່ານ ເພື່ອຊາບ ແລະ ຈັດຕັ້ງປະຕິບັດຕາມເນື້ອໃນຂ້າງເທິງນີ້ດ້ວຍ.

ລັດຖະມົນຕີ

ບ ເຂັມມະນີ ພົນເສນາ

- ບ່ອນສົ່ງ:
- ບັນດາທ່ານ ຮອງນາຍົກລັດຖະມົນຕີ.
- ລັດຖະມົນຕີ, ຫົວໜ້າຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ.
- ອົງການກວດກາລັດຖະບານ.
- ກະຊວງການເງິນ.
- ກະຊວງກະສິກຳ ແລະ ປ່າໄມ້.
- ຄະນະສະເພາະກິດ 40/ນຍ.
- ຫ້ອງວ່າການປົກຄອງແຂວງ (7 ແຂວງ).
- ບັນດາກົມທີ່ກ່ຽວຂ້ອງ.

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ
ກົມອຸດສາຫະກຳ ແລະ ຫັດຖະກຳ

ເລກທີ 1098/ກອຫ.ຄຮ
ນະຄອນຫຼວງວຽງຈັນ, ວັນທີ 14 NOV 2016

## ບັນຊີໂຮງງານປຸງແຕ່ງໄມ້ 28 ໂຮງງານ ທີ່ຕັ້ງຢູ່ໃກ້ ແລະ ຢູ່ໃນເຂດ ປ່າປ້ອງກັນ, ປ່າສະຫງວນ ແລະ ປ່າຫວງຫ້າມ ຫຼື ປ່າຜະລິດ

| ລ/ດ | ຊື່ໂຮງງານ | ທີ່ຕັ້ງໂຮງງານ | | ເຂດປ່າປ້ອງກັນ | | ເຂດປ່າສະຫງວນ | | ເຂດປ່າຜະລິດ | | ຜູ້ອະນຸຍາດ (ເລກທີ, ລົງວັນທີ) | ປະເພດປ່າ (ປ້ອງກັນ, ສະຫງວນ, ຜະລິດ) |
|---|---|---|---|---|---|---|---|---|---|---|---|
| | | ບ້ານ | ເມືອງ | ໄລຍະຫ່າງ | ຢູ່ໃນ | ໄລຍະຫ່າງ | ຢູ່ໃນ | ໄລຍະຫ່າງ | ຢູ່ໃນ | | |
| 1 | 2 | 3 | 4 | 5 | 6 | 7 | 8 | 9 | 10 | 11 | 12 |
| 1. ແຂວງ ອຸດົມໄຊ (ມີ 8 ໂຮງງານ) | | | | | | | | | | | |
| 1) | ຣ/ງ ປຸງແຕ່ງໄມ້ອັດ | ແຟນ | ໄຊ | | | 1 ກມ | | | | ແຂວງອະນຸຍາດ ເລກທີ 908/ຈຂ.ອຊ, ລົງວັນທີ 11/6/2013 | ປ່າສະຫງວນແຫ່ງຊາດ ພູອີ່ຜີ |
| 2) | ຣ/ງ ປຸງແຕ່ງໄມ້ ຈັນດາວັນ | ແຟນ | ໄຊ | | | 1 ກມ | | | | ພະແນກ ອຄ ອະນຸຍາດ ເລກທີ 33/ອຄ.ອຊ, ລົງວັນທີ 5/3/2010 | |
| 3) | ຣ/ງ ປຸງແຕ່ງໄມ້ ສີພັນສາລີກາ | ຫຼັກ35 | ໄຊ | | | | 1 ຣ/ງ | | | ແຂວງອະນຸຍາດ ເລກທີ 908/ຈຂ.ອຊ, ລົງວັນທີ 11/6/2013 | |
| 4) | ຣ/ງ ປຸງແຕ່ງໄມ້ ໄມກົມຄຳສີງຫາ | ຫຼັກ32 | ໄຊ | | | | 1 ຣ/ງ | | | ພະແນກ ອຄ ອະນຸຍາດ ເລກທີ 0597/ຫາຈຫ, ລົງວັນທີ 19/12/2008 | |
| 5) | ຣ/ງ ປຸງແຕ່ງໄມ້ ບຸນລີບ ມອນສະຫວັນ | ດອນນີ້ວ | ງາ | | | | | 1 ກມ | | ພະແນກ ອຄ ອະນຸຍາດ ເລກທີ 42/ອຄ.ອຊ, ລົງວັນທີ 22/3/2010 | ປ່າຜະລິດເມືອງງາ |
| 6) | ຣ/ງ ປຸງແຕ່ງໄມ້ ທອງແກ້ວ | ດອນແອນ | ງາ | | | | | 1 ກມ | | ພະແນກ ອຄ ອະນຸຍາດ ເລກທີ 21/ອຄ.ອຊ, ລົງວັນທີ 25/1/2008 | |
| 7) | ຣ/ງ ປຸງແຕ່ງໄມ້ ອາເຊີ | ຫ້ວຍເຊີນ | ງາ | | | | | | 1 ຣ/ງ | ພະແນກ ອຄ ອະນຸຍາດ ເລກທີ 20/ອຄ.ອຊ, ລົງວັນທີ 26/2/2011 | |
| 8) | ຣ/ງ ປຸງແຕ່ງໄມ້ ອ່ອນແກ້ວ | ປາກໍ | ຫຼາ | | | | | | 1 ຣ/ງ | ຍ້າຍມາຈາກເມືອງຫຼາ (ຍັງບໍ່ທັນໄດ້ອອກໃບອະນຸຍາດດຳເນີນກິດຈະການ) | ປ່າຜະລິດເມືອງຫຼາ |

| 1 | 2 | 3 | 4 | 5 | 6 | 7 | 8 | 9 | 10 | 11 | 12 |
|---|---|---|---|---|---|---|---|---|---|---|---|
| | 2. ແຂວງ ບໍລິຄຳໄຊ (ມີ 4ໂຮງງານ) | | | | | | | | | | |
| 1) | ຣ/ງ ປຸງແຕ່ງໄມ້ SLP ແສງຈັນ | ທາດຊຽງ ຕອມ | ບໍລິຄັນ | | | 1 ກມ | | | | ພະແນກ ອຄ (ທະບຽນ ວ/ກ ເລກທີ 2580/ຈທວ, ລົງວັນທີ 9/8/2010) | ປ່າສະຫງວນພູງ |
| 2) | ຣ/ງ ປຸງແຕ່ງໄມ້ ມະນີວົງ | ທາດຊຽງ ຕອມ | ບໍລິຄັນ | | | 1 ກມ | | | | ພະແນກ ອຄ (ທະບຽນ ວ/ກ ເລກທີ 1054/ຈທວ, ລົງວັນທີ 9/4/2009) | |
| 3) | ຣ/ງ ປຸງແຕ່ງໄມ້ ອິນທະລັງສີ | ສີມຸງຄູນ | ບໍລິຄັນ | | | 1 ກມ | | | | ພະແນກ ອຄ (ທະບຽນ ວ/ກ ເລກທີ 3256/ຈທວ, ລົງວັນທີ 4/8/2011) | |
| 4) | ຣ/ງ ປຸງແຕ່ງໄມ້ ມານິດາ | ສີມຸງຄູນ | ບໍລິຄັນ | | | 1 ກມ | | | | ພະແນກ ອຄ (ທະບຽນ ວ/ກ ເລກທີ 048/ຈທວ. ຂບຊ, ລົງວັນທີ 3/10/2008) | |
| | 3. ແຂວງ ໄຊສົມບູນ (ມີ 8 ໂຮງງານ) | | | | | | | | | | |
| 1) | ຣ/ງ ປຸງແຕ່ງໄມ້ ໄຊຍະຄີ | ຊຽງຄົງ | ທ່າໂທມ | ຢູ່ຕິດ | | | | | | ພະແນກ ອຄ ທະບຽນ ວ/ກ ເລກທີ 095/ຈທວ, ລົງວັນທີ 23/3/15 (ໂອນມາຈາກແຂວງຊຽງຂວາງ) | ປ່າປ້ອງກັນແຫຼ່ງນ້ຳຊັນ-ນ້ຳເຜືອກ |
| 2) | ຣ/ງ ປຸງແຕ່ງໄມ້ ຄົບວົງຈອນວຽງທອງ | ວຽງທອງ | ທ່າໂທມ | 1 ກມ | | | | | | ພະແນກ ອຄ ທະບຽນ ວ/ກ ເລກທີ 096/ຈທວ ລົງວັນທີ 23/3/2015 (ໂອນມາຈາກແຂວງຊຽງຂວາງ) | |
| 3) | ຣ/ງ ປຸງແຕ່ງໄມ້ສຳເລັດຮູບ ຄອນສະຫວັນ | ນາຫ້ອງ | ທ່າໂທມ | 1 ກມ | | | | | | ກະຊວງ ອຄ ທະບຽນ ວ/ກ ເລກທີ 5935/ຈທວ, ລົງວັນທີ 1/6/09 (ດັດແກ້ມາຈາກແຂວງຊຽງຂວາງ) | |
| 4) | ຣ/ງ ປຸງແຕ່ງໄມ້ ໂພໄຊ | ຊຳກໍທອງ | ທ່າໂທມ | | 1 ຣ/ງ | | | | | ພະແນກ ອຄ ທະບຽນ ວ/ກ ເລກທີ 099/ຈທວ, ລົງວັນທີ 26/3/2015 | |
| 5) | ຣ/ງ ປຸງແຕ່ງໄມ້ສຳເລັດຮູບ ສຸວັນທອນ | ທົດນຸນ | ທ່າໂທມ | 1 ກມ | | | | | | ພະແນກ ອຄ ທະບຽນ ວ/ກ ເລກທີ 0110/ຈທວ, ລົງວັນທີ 22/4/15 (ໂອນມາຈາກແຂວງຊຽງຂວາງ) | |
| 6) | ຣ/ງ ປຸງແຕ່ງໄມ້ສຳເລັດຮູບຄົບວົງຈອນ ນາງຄຳໃບ | ນ້ຳລ້ອງ | ທ່າໂທມ | ຢູ່ຕິດ | | | | | | ພະແນກ ອຄ ທະບຽນ ວ/ກ ເລກທີ 0106/ຈທວ, ລົງວັນທີ 7/4/2015 (ໂອນມາແຂວງຊຽງຂວາງ) | |
| 7) | ຣ/ງ ປຸງແຕ່ງໄມ້ ເພັດມີໄຊ | ທົດນຸນ | ທ່າໂທມ | 1 ກມ | | | | | | ພະແນກ ອຄ ທະບຽນ ວ/ກ ເລກທີ 0118/ຈທວ, ວັນທີ29/5/2015 | |
| 8) | ຣ/ງ ປຸງແຕ່ງໄມ້ ໂຊກໄຊ | ຜາແອ່ນ | ຮົ່ມ | | 1 ຣ/ງ | | | | | ພະແນກ ອຄ ທະບຽນ ວ/ກ ເລກທີ 0175/ຈທວ, ລົງວັນທີ 2/2/2016 | ປ່າປ້ອງກັນນ້ຳງຽບ-ນ້ຳມັງ |

| 1 | 2 | 3 | 4 | 5 | 6 | 7 | 8 | 9 | 10 | 11 | 12 |
|---|---|---|---|---|---|---|---|---|---|---|---|
| | 4. ແຂວງ ຄຳມ່ວນ (ມີ 1 ໂຮງງານ) | | | | | | | | | | |
| 1) | ຣ/ງ ເຟີນິເຈີແກະສະຫຼັກໄມ້ຄິບວົງຈອນ ສີຫາລາດ | ເຂດບໍ່ໂພນຕິ້ວ | ຫີນບູນ | | 1 ຣ/ງ | | | | | ກະຊວງ ອຄ (ທະບຽນ ວ/ກ ເລກທີ 1937/ຈທວ, ລົງວັນທີ 18/5/2010) | ປ່າປ້ອງກັນ ແລະ ປ່າສະຫງວນ ພູຫີນປູນ |
| | 5. ແຂວງ ສະຫວັນນະເຂດ (ມີ 1 ໂຮງງານ) | | | | | | | | | | |
| 1) | ຣ/ງ ປຸງແຕ່ງໄມ້ ຫຼັກ 13 ພຸທອນ | ຕາດໂຮເຊ | ພິນ | | | | 1 ຣ/ງ | | | ກະຊວງ ອຄ (ທະບຽນ ວ/ກ ເລກທີ 828/ຈທວ, ລົງວັນທີ 30/11/2015) | ປ່າສະຫງວນ ດົງພູວຽງ, ປ່າປ້ອງກັນ ເຊຕະນວນ-ພູນາກ |
| | 6. ແຂວງ ສາລະວັນ (ມີ 1 ໂຮງງານ) | | | | | | | | | | |
| 1) | ຣ/ງ ປຸງແຕ່ງໄມ້ ນາງ ສົມຄິດ ວິຍະເກດ | ກະຕາວ | ຕຸ້ມລານ | 1 ກມ | | | | | | ຄລທ ແຂວງອະນຸຍາດ ເລກທີ 20/ຄລທ.ສວ, ລົງວັນທີ 3/11/2005 | ປ່າປ້ອງກັນພູເກົ້າ-ພູທ້າ |
| | 7. ແຂວງ ຈຳປາສັກ (ມີ 5 ໂຮງງານ) | | | | | | | | | | |
| 1) | ຣ/ງ ເຟີນິເຈີ ກິດຕິພົນ I | ນາລານ | ປະທຸມພອນ | | | | | | 1 ຣ/ງ | ພະແນກ ອຄ ອະນຸຍາດ ເລກທີ 32/ອຄ.ຈສ, ລົງວັນທີ 20/8/2010 | ປ່າພະລິດ ເມືອງປະທຸມພອນ |
| 2) | ຣ/ງ ເຟີນິເຈີ ບຸນຍັງ | ນາລານ | ປະທຸມພອນ | | | | | | 1 ຣ/ງ | ພະແນກ ອຄ ອະນຸຍາດ ເລກທີ 09-12/ອຄ.ຈສ, ລົງວັນທີ 1/6/ 2012 | |
| 3) | ຣ/ງ ເຟີນິເຈີ ແສງວົງເດືອນ | ນາລານ | ປະທຸມພອນ | | | | | | 1 ຣ/ງ | ພະແນກ ອຄ ອະນຸຍາດ ເລກທີ 05-12/ອຄ.ຈສ, ລົງວັນທີ 12/3/2012 | |
| 4) | ຣ/ງ ເຟີນິເຈີ ສີທັດ | ນາລານ | ປະທຸມພອນ | | | | 1 ຣ/ງ | | | ພະແນກ ອຄ ອະນຸຍາດ ເລກທີ 13-15/ອຄ.ຈສ, ລົງວັນທີ 26/8/2015 | ປ່າສະຫງວນ ດົງຫົວສາວ |
| 5) | ຣ/ງ ປຸງແຕ່ງໄມ້ ອຸດົມສິນ | ທົບສໍ້ | ປະທຸມພອນ | | | | 1 ຣ/ງ | | | ບໍ່ທັນໄດ້ອອກອະນຸຍາດໃຫ້ | ປ່າສະຫງວນແຫ່ງຊາດ ເຊປຽນ |
| | ລວມທັງໝົດ 28 ໂຮງງານ | | | 7 | 3 | 6 | 5 | 2 | 5 | | |

• ໝາຍເຫດ:

- ໃນຈຳນວນ 28 ຣ/ງ ມີ 13 ຣ/ງ ຕັ້ງຢູ່ໃນ 3 ປະເພດປ່າ ແລະ ມີ 15 ຣ/ງ ຕັ້ງຢູ່ໃກ້ 3 ປະເພດປ່າ.
- ໂຮງງານທີ່ຕັ້ງຢູ່ໃນ ແລະ ໃກ້ ປ່າປ້ອງກັນ ມີ 10 ຣ/ງ, ໃນນີ້ ມີ 3 ຣ/ງ ຕັ້ງຢູ່ໃນ ແລະ ມີ 7 ຣ/ງ ຕັ້ງຢູ່ໃກ້.
- ໂຮງງານທີ່ຕັ້ງຢູ່ໃນ ແລະ ໃກ້ ປ່າສະຫງວນ ມີ 11 ຣ/ງ, ໃນນີ້ ມີ 5 ຣ/ງ ຕັ້ງຢູ່ໃນ ແລະ ມີ 6 ຣ/ງ ຕັ້ງຢູ່ໃກ້.
- ໂຮງງານທີ່ຕັ້ງຢູ່ໃນ ແລະ ໃກ້ ປ່າພະລິດ ມີ 7 ຣ/ງ, ໃນນີ້ ມີ 5 ຣ/ງ ຕັ້ງຢູ່ໃນ ແລະ ມີ 2 ຣ/ງ ຕັ້ງຢູ່ໃກ້.

ຮ. ຫົວໜ້າກົມ

ສະຫວາດ ຂຸນດາວົງ
Savath KHOUNDAVONG